ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# 7 ບັນຫາທີ່ຈະຕ້ອງແກ້ດ່ວນໃນ 5 ປີຕໍ່ໜ້າ



ໃນຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX ແລະ ແຜນງົບປະມານແຫ່ງລັດ 5 ປີ (2021-2025) ທີ່ທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີໄດ້ລາຍງານຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ IX ກ່ຽວກັບບາງບັນຫາທີ່ຈະຕ້ອງແກ້ຮີບດ່ວນໃນ 5 ປີຕໍ່ໜ້າໂດຍແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການພັດທະນາຕາມທິດ 3 ສ້າງຄຽງຄູ່ກັບການສ້າງວຽກເຮັດງານທຳ ແລະ ການກະຈາຍລາຍໄດ້ໃຫ້ທົ່ວເຖິງກວ່າເກົ່າເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານສັງຄົມ (ລະຫວ່າງຄົນຮັ່ງ ແລະ ຄົນທຸກ, ຕົວເມືອງ ແລະ ຊົນນະບົດ), ສຸມໃສ່ຮັບປະກັນການເຂົ້າເຖິງການບໍລິການສາທາລະນະ (ສຶກສາ, ສາທາ) ຢູ່ເຂດຫ່າງໄກສອກຫຼີກໃຫ້ໄດ້ໂດຍພື້ນຖານ; ແກ້ໄຂຄວາມບອບບາງທາງດ້ານເສດຖະກິດເປັນຕົ້ນແມ່ນການເຕີບໂຕສ່ວນໃຫຍ່ທີ່ເອື່ອຍອີງໃສ່ແຕ່ການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ບໍ່ທັນມີປະສິດທິຜົນເທົ່າທີ່ຄວນ, ຄຸນນະພາບຂອງການເຕີບໂຕບໍ່ສູງ, ບໍ່ທັນສາມາດກະຈາຍລາຍໄດ້ຢ່າງທົ່ວເຖິງ, ຖານການຜະລິດຍັງບໍ່ທັນມີພື້ນຖານໜັກແໜ້ນ ແລະ ໝັ້ນຄົງ, ເພີ່ມທະວີການຕິດຕາມການຈັດຕັ້ງປະຕິບັດບັນດາໂຄງການຈຸດສຸມທີ່ຊຸກຍູ້ການຜະລິດ ແລະ ບໍລິການ; ແກ້ໄຂຄວາມບອບບາງດ້ານການເງິນ, ແກ້ໄຂບັນຫາໜີ້ສິນສາທາລະນະ, ການເກັບລາຍຮັບບໍ່ຄົບຖ້ວນ, ບໍ່ສົມຄູ່ກັບຄວາມສາມາດບົ່ມຊ້ອນ ແລະ ມີການຮົ່ວໄຫຼ, ງົບປະມານບໍ່ພຽງພໍກັບຄວາມຈຳເປັນຂອງການພັດທະນາ, (ສ່ວນຫຼາຍແມ່ນສຸມໃສ່ແກ້ໜີ້ສິນທີ່ບໍ່ມີລັກສະນະກະຕຸ້ນລະບົບເສດຖະກິດ ແລະ ການພັດທະນາ), ຍົກລະດັບການປະຕິບັດນະໂຍບາຍປະຢັດໃຫ້ກາຍເປັນວາລະແຫ່ງຊາດ;

ແກ້ໄຂຄວາມບອບບາງທາງດ້ານເງິນຕາໂດຍສຸມໃສ່ການແກ້ໄຂສະພາບການຂາດດຸນຊຳລະກັບຕ່າງປະເທດ, ດັດສົມປະລິມານເງິນ M2 ເພື່ອສ້າງຄວາມຄ່ອງຕົວໃຫ້ແກ່ລະບົບ ແລະ ສະໜອງສິນເຊື່ອໃຫ້ການຜະລິດ ແລະ ການບໍລິການພາຍໃນທີ່ມີປະສິດທິຜົນແນໃສ່ຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກ, ສ້າງຄວາມເຂັ້ມແຂງໃຫ້ຖານະເງິນຕາຕ່າງປະເທດເພື່ອຮັບປະກັນໄດ້ສະຖຽນລະພາບຂອງຄ່າເງິນ ແລະ ລາຄາ; ແກ້ໄຂຜົນກະທົບການລະບາດພະຍາດໂຄວິດ-19 ເລັ່ງໃສ່ການຟື້ນຟູທຸລະກິດທີ່ໄດ້ຮັບຜົນກະທົບຈາກການ

ລະບາດດັ່ງກ່າວໃຫ້ຄືນສູ່ສະພາບປົກກະຕິ, ເອົາໃຈໃສ່ເປັນຕົ້ນຕໍແກ້ໄຂບັນຫາຫວ່າງງານ ແລະ ສ້າງສີມືແຮງງານ; ແກ້ໄຂການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ແລະ ປາກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນບັນຫາຢາເສບຕິດ, ການສໍ້ລາດບັງຫຼວງ, ອຸປະຕິເຫດຕາມທ້ອງຖະໜົນໃຫ້ເຄັ່ງຄັດເຂົ້າສູ່ລວງເລິກທັນເຂົ້າສູ່ການຄຸ້ມຄອງດ້ວຍກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດ, ປັບປຸງ ແລະ ສ້າງສະພາບແວດລ້ອມເອື້ອອໍານວຍໃຫ້ແກ່ການດຶງດູດການລົງທຶນ, ແກ້ໄຂປະກົດການສວຍໃຊ້ໜ້າທີ່ຂອງພະນັກງານໃນທາງທີ່ບໍ່ຖືກຕ້ອງ; ສຸມໃສ່ແກ້ໄຂການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ມີຈຸດສຸມ, ສົ່ງເສີມວິຊາຊີບ ແລະ ການຫັນເປັນຊ່ຽວຊານຕິດພັນກັບການຫັນເປັນທັນສະໄໝໃນຍຸກ 4,0 ແລະ ວິຖີຊີວິດແບບໃຫມ່ (New Normal).

ທ່ານນາຍົກລັດຖະມົນຕີຍັງໄດ້ເນັ້ນ 5 ວຽກສໍາຄັນຕົ້ນຕໍທີ່ຈະສຸມໃສ່ປະຕິບັດແມ່ນສືບຕໍ່ຮັກສາສະຖຽນລະພາບທາງການເມືອງ, ຄວາມສະຫງົບປອດໄພໃຫ້ໜັກແໜ້ນ ແລະ ຕັ້ງໜ້າແກ້ໄຂປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມໃຫ້ໝົດໄປເທື່ອລະກ້າວ. ສືບຕໍ່ເພີ່ມທະວີການຄຸ້ມຄອງເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງດ້ວຍທຸກມາດຕະການ ລວມທັງການປະຕິຮູບລະບົບການເງິນ-ງົບປະມານຂອງ ລັດເພື່ອເຮັດໃຫ້ການເຕີບໂຕທາງດ້ານເສດຖະກິດມີຄຸນນະພາບເຂັ້ມແຂງ ແລະ ຍືນຍົງ. ສືບຕໍ່ປັບປຸງກົນໄກການຄຸ້ມຄອງບໍລິຫານພາກລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ໂປ່ງໃສ, ສິ່ງສໍາຄັນແມ່ນຈະເພີ່ມຄວາມເອົາໃຈໃສ່ໃນການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດຕາມສິດໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນຕາມລະບຽບກົດໝາຍ. ສືບຕໍ່ເອົາໃຈໃສ່ສ້າງບັນດາປັດໄຈເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs), ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດເປັນກ້າວໆ. ສືບຕໍ່ຢຶດໝັ້ນ ແລະ ປະຕິບັດແນວທາງການຕ່າງປະເທດ, ສັນຕິພາບ, ມິດຕະພາບຂອງພັກ ແລະ ຮ່ວມມືຢ່າງຕັ້ງໜ້າລວມທັງການຊຸກຍູ້ສົ່ງເສີມການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດໃຫ້ຂະຫຍາຍຕົວທັງທາງກວ້າງ ແລະ ທາງເລິກ.

# ຂ່າວ: ຣັດສະໝີ ດວງສັດຈະ

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ